**ການຊ່ວຍເຫຼືອທາງດ້ານການເງິນ:** MercyOne ມຸ່ງໝັ້ນທີ່ຈະໃຫ້ການເບິ່ງແຍງດູແລ, ການປິ່ນປົວ ແລະ ການບໍລິການໃຫ້ແກ່ໝົດທຸກຄົນທີ່ເຂົ້າມາຫາພວກເຮົາໂດຍອີງໃສ່ຄວາມຈຳເປັນທາງການແພດ.

*ກວດເບິ່ງຄຳແນະນຳກ່ຽວກັບລະດັບຄວາມທຸກຍາກຂອງລັດຖະບານກາງ ຢູ່ບ່ອນນີ້*

https://aspe.hhs.gov/topics/poverty-economic-mobility/poverty-guidelines

### *ນະໂຍບາຍວ່າດ້ວຍການຊ່ວຍເຫຼືອທາງດ້ານການເງິນ*

- ການຊ່ວຍເຫຼືອທາງດ້ານການເງິນ ແມ່ນສະໜອງໃຫ້ໂດຍອີງໃສ່ລາຍຮັບຂອງທ່ານ. ນີ້ແມ່ນກຳນົດໂດຍການນຳໃຊ້ ຄຳແນະນຳກ່ຽວກັບລະດັບຄວາມທຸກຍາກຂອງລັດຖະບານກາງ.
- ຖ້າທ່ານມີລາຍໄດ້ທີ່ [200]% ຫຼື ໜ້ອຍກວ່ານັ້ນ ຂອງຄຳແນະນຳກ່ຽວກັບລະດັບຄວາມທຸກຍາກຂອງລັດຖະບານກາງ, ທ່ານສາມາດໄດ້ຮັບສ່ວນຫຼຸດຢ່າງເຕັມສ່ວນ. ສ່ວນຫຼຸດນີ້ຈະນຳໃຊ້ກັບການບໍລິການທີ່ຈຳເປັນທາງການແພດ.
- ຖ້າທ່ານມີລາຍໄດ້ຢູ່ລະຫວ່າງ [201]% ຫາ [400]% ຂອງ ລະດັບຄວາມທຸກຍາກຂອງລັດຖະບານກາງ ທ່ານອາດຈະໄດ້ຮັບສ່ວນຫຼຸດບາງສ່ວນ.
- MercyOne ຈະບໍ່ຮຽກເກັບຄ່າບໍລິການຈາກຄົນເຈັບທີ່ມີເງື່ອນໄຂຫຼາຍກວ່າອັດຕາສ່ວນຫຼຸດຂອງ Medicare.
- ການຈ່າຍຮ່ວມ, ການປະກັນໄພຮ່ວມ ແລະ ຈຳນວນທີ່ເປັນຄວາມຮັບຜິດຊອບສ່ວນທຳອິດຂອງທ່ານ ອາດສາມາດໄດ້ຮັບສ່ວນຫຼຸດ. ທ່ານສາມາດມີເງື່ອນໄຂໄດ້ຮັບການຊ່ວຍເຫຼືອ ຖ້າທ່ານມີລາຍໄດ້ໜ້ອຍກວ່າ [400]% ຂອງລະດັບຄວາມທຸກຍາກຂອງລັດຖະບານກາງ.
- ຖ້າທ່ານກຳລັງປະເຊີນກັບຄ່າໃຊ້ຈ່າຍທີ່ໜັກໜ່ວງ, ທ່ານກໍອາດຈະໄດ້ຮັບສ່ວນຫຼຸດ. ສິ່ງນີ້ເກີດຂຶ້ນເມື່ອຄ່າໃຊ້ຈ່າຍທາງການແພດຂອງທ່ານໃນ 12 ເດືອນຜ່ານມາແມ່ນເກີນ 20% ຂອງລາຍໄດ້ຄົວເຮືອນຂອງທ່ານ. ສ່ວນຫຼຸດອາດຈະລວມທັງຄ່າຮ່ວມຈ່າຍຂອງທ່ານອີກດ້ວຍ. ນອກຈາກນັ້ນ, ກໍຍັງສາມາດລວມທັງການປະກັນໄພຮ່ວມ ແລະ ຈຳນວນທີ່ເປັນຄວາມຮັບຜິດຊອບສ່ວນທຳອິດອີກດ້ວຍ.

ການບໍລິການທີ່ເລືອກ ເຊັ່ນ: ການຜ່າຕັດເສີມຄວາມງາມ ແມ່ນບໍ່ມີສິດໄດ້ຮັບການຊ່ວຍເຫຼືອທາງດ້ານການເງິນ.

ເພື່ອຮ້ອງຂໍການຊ່ວຍເຫຼືອທາງດ້ານການເງິນ, ໃຫ້ຕື່ມຂໍ້ມູນໃສ່ ແລະ ສົ່ງຄຳຮ້ອງຂໍສະໝັກ. ນະໂຍບາຍວ່າດ້ວຍການຊ່ວຍເຫຼືອທາງດ້ານການເງິນ ຂອງ MercyOne ແລະ ຄຳຮ້ອງຂໍສະໝັກແມ່ນມີຢູ່ໃນໜ້າເວັບຂອງໂຮງໝໍ https://www.mercyone.org/for-patients/billing-and-financial-information/financial-assistance. ນອກຈາກນັ້ນ, ທ່ານກໍຍັງສາມາດຮ້ອງຂໍສຳເນົານະໂຍບາຍ ແລະ ຄຳຮ້ອງຂໍສະໝັກໄດ້ໂດຍບໍ່ເສຍຄ່າອີກດ້ວຍ ໂດຍການໄປພົບດ້ວຍຕົນເອງ, ທາງໄປສະນີຫຼື ການໂທຫາສະຖານທີ່ທີ່ທ່ານເຂົ້າຮັບການເບິ່ງແຍງດູແລ ຫຼື ໂດຍການຕິດຕໍ່. ຂໍ້ມູນຕິດຕໍ່ແມ່ນມີຢູ່ໃນຕາຕະລາງຂ້າງລຸ່ມນີ້.

ນະໂຍບາຍວ່າດ້ວຍການຊ່ວຍເຫຼືອທາງດ້ານການເງິນ, ຄຳຮ້ອງຂໍສະໝັກ ແລະບົດສະຫຼຸບເປັນພາສາທຳມະດາທີ່ເຂົ້າໃຈງ່າຍ ຂອງ MercyOne ໄດ້ຖືກແປເປັນພາສາອື່ນໆຫຼາຍພາສາ ແລະ ສາມາດນຳໃຊ້ໄດ້ໂດຍການຕິດຕໍ່ໂຮງໝໍ ຫຼືພະແນກບໍລິການທາງດ້ານການເງິນສຳລັບຄົນເຈັບ (Patient Financial Services) ທີ່ໄດ້ລະບຸໄວ້ຂ້າງເທິງ.

***ບັນຊີລາຍຊື່ຜູ້ໃຫ້ບໍລິການ:*** ບັນຊີລາຍຊື່ຜູ້ໃຫ້ບໍລິການທີ່ໃຫ້ການເບິ່ງແຍງດູແລສຸກເສີນ ຫຼື ທີ່ຈຳເປັນທາງການແພດຢູ່ໃນໂຮງໝໍ ທີ່ໄດ້ຮັບການຄຸ້ມຄອງໂດຍນະໂຍບາຍວ່າດ້ວຍການຊ່ວຍເຫຼືອດ້ານການເງິນຂອງໂຮງໝໍ, ແມ່ນມີໃຫ້ທາງອອນລາຍ ຫຼື ຕາມການຮ້ອງຂໍ.

***ບັນດາແຜນການຈ່າຍເງິນໄລຍະສັ້ນ ແລະ ໄລຍະຍາວ:*** ຖ້າທ່ານບໍ່ສາມາດຈ່າຍສ່ວນແບ່ງຂອງທ່ານໄດ້, ທ່ານອາດຈະມີເງື່ອນໄຂໄດ້ຮັບບັນດາແຜນການຊໍາລະໄລຍະສັ້ນ ຫຼື ໄລຍະຍາວ. ແຜນການຈ່າຍເງິນໄລຍະສັ້ນ ຂອງ MercyOne ແມ່ນບໍ່ມີດອກເບ້ຍ. ບັນດາຄົນເຈັບຕ້ອງຈ່າຍຍອດເງິນຄົງເຫຼືອພາຍໃນໜຶ່ງປີ. ທ່ານສາມາດໄດ້ຮັບແຜນທີ່ມີດອກເບ້ຍໄລຍະຍາວໄດ້ ຖ້າທ່ານບໍ່ສາມາດຊໍາລະຍອດເງິນທັງໝົດໄດ້ພາຍໃນໜຶ່ງປີ.

***ການບໍລິການດ້ານການເງິນຂອງຄົນເຈັບ:*** ບັນດາທີ່ປຶກສາດ້ານການເງິນພ້ອມທີ່ຈະຊ່ວຍທ່ານ. ພວກເຂົາຈະຊ່ວຍທ່ານໃນການຕື່ມຂໍ້ມູນໃສ່ຄໍາຮ້ອງຂໍສະໝັກການຊ່ວຍເຫຼືອທາງດ້ານການເງິນອີກດ້ວຍ. ນີ້ຈະກໍານົດວ່າຈະມີການຊ່ວຍເຫຼືອຫຍັງໃຫ້ແດ່. ນີ້ລວມມີການປະເມີນການມີສິດໄດ້ຮັບ Medicaid.

ທ່ານສາມາດຕິດຕໍ່ທີ່ປຶກສາທາງດ້ານການເງິນໄດ້ ຢູ່ບ່ອນທີ່ທ່ານເຂົ້າຮັບການເບິ່ງແຍງດູແລ. ທີ່ປຶກສາທາງດ້ານການເງິນສາມາດຊ່ວຍກໍານົດວ່າທ່ານມີເງື່ອນໄຂໄດ້ຮັບການຊ່ວຍເຫຼືອທາງດ້ານການເງິນ ຫຼື ບໍ່. ນອກຈາກນັ້ນ,
ບັນດາທີ່ປຶກສາດ້ານການເງິນກໍຍັງສາມາດໃຫ້ສໍາເນົານະໂຍບາຍວ່າດ້ວຍການຊ່ວຍເຫຼືອທາງດ້ານການເງິນ, ຄໍາຮ້ອງຂໍສະໝັກ ແລະ ບົດສະຫຼຸບເປັນພາສາທໍາມະດາແບບບໍ່ເສຍຄ່າອີກດ້ວຍ.

MERCYONE

*ຂໍ້ມູນຕິດຕໍ່*

| ກະຊວງສາທາລະນະສຸກ | ສົ່ງຄໍາຮ້ອງສະໝັກທີ່ຕື່ມຂໍ້ມູນໃສ່ແລ້ວ ແລະ ເອກະສານອື່ນໆ ໄປຍັງ: | ເບີໂທລະສັບ | ເບີແຟັກ |
|---|---|---|---|
| Cedar Falls | MercyOne<br>Attention: Financial Counselor<br>3421 West 9th Street, Waterloo, IA 50702 | 319-272-0044<br>ຫຼື 1-800-728-0159 | 319-272-5757 |
| Clinton | MercyOne Clinton Medical Center<br>Attention: Financial Counselor<br>1410 N. 4th St., Clinton, IA 52732 | 563-244-5678 | 563-244-3523 |
| Des Moines / West Des Moines | Patient Business Service Center<br>20555 Victor Pkwy, Livonia MI, 48152 | 734-343-3065 | 313-334-3271 |
| Des Moines Clinic | MercyOne Medical Group<br>405 SW 5th Street Ste E, Des Moines, IA, 50309 | 515-643-2519 | 515-358-7294 |
| Dubuque | MercyOne Dubuque Medical Center<br>Attention: Financial Counselor<br>250 Mercy Dr, Dubuque, IA 52001 | 563-589-8913<br>ຫຼື 563-589-9066 | 563-589-9029 |
| Dyersville | MercyOne Dubuque Medical Center<br>Attention: Financial Counselor<br>250 Mercy Dr, Dubuque, IA 52001 | 563-589-8913<br>ຫຼື 563-589-9066 | 563-589-9029 |
| Newton | Patient Business Service Center<br>20555 Victor Pkwy, Livonia MI, 48152 | 734-343-3065 | 313-334-3271 |
| New Hampton | MercyOne North Iowa Medical Center<br>Patient Access<br>Attention: Financial Counselor<br>1000 4th Street SW, Mason City, IA 50401 | 641-428-3029<br>ຫຼື 641-428-7824 | 641-428-7886 |
| North Iowa (Mason City) | MercyOne North Iowa Medical Center<br>Patient Access<br>Attention: Financial Counselor<br>1000 4th Street SW, Mason City, IA 50401 | 641-428-3029<br>ຫຼື 641-428-7824 | 641-428-7886 |
| Oelwein | MercyOne<br>Attention: Financial Counselor<br>3421 West 9th Street, Waterloo, IA 50702 | 319-272-0044<br>ຫຼື 1-800-728-0159 | 319-272-5757 |
| Primghar | MercyOne Siouxland<br>Attention: Financial Counselor<br>PO Box 3168, Sioux City, IA 5110 | 712-957-2300 | 712-957-0030 |
| Siouxland | MercyOne Siouxland<br>Attention: Financial Counselor<br>PO Box 3168, Sioux City, IA 5110 | 712-279-2323 | 712-279-2769 |
| Waterloo | MercyOne<br>Attention: Financial Counselor<br>3421 West 9th Street, Waterloo, IA 50702 | 319-272-0044<br>ຫຼື 1-800-728-0159 | 319-272-5757 |